ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---===000===---

ທະນາຄານແຫ່ງ ສປປ ລາວ
ກົມບັນຊີແລະການເງິນ

ເລກທີ: 285 /ກບງ
ນະຄອນຫຼວງວຽງຈັນ, ວັນທີ: 26 MAY 2017

# ບົດແນະນຳ
# ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS)
# ສະບັບ IAS 21: ຜົນກະທົບຈາກການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ມາດຕາ 14 ສະບັບເລກທີ 47/ສພຊ, ລົງວັນທີ 22 ທັນວາ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມບັນຊີແລະການເງິນ ສະບັບເລກທີ 1047/ທຫລ, ລົງວັນທີ 30/12/2015;

ກົມບັນຊີແລະການເງິນ ທະນາຄານແຫ່ງ ສປປ ລາວ ອອກບົດແນະນຳການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ສະບັບ IAS 21: ຜົນກະທົບຈາກການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດດັ່ງນີ້:

## I. ຈຸດປະສົງ.

ບົດແນະນຳສະບັບນີ້ມີຈຸດປະສົງເພື່ອໃຫ້ທະນາຄານທຸລະກິດຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ສະບັບ IAS 21: ຜົນກະທົບຈາກການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ (The Effects of Changes in Foreign Exchange Rates) ໃຫ້ມີຄວາມຖືກຕ້ອງຕາມລະບຽບກົດໝາຍ.

## II. ອະທິບາຍຄຳສັບ.

ຄຳສັບຕ່າງໆ ໃນບົດແນະນຳສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ການຊື້-ຂາຍເງິນຕາຕ່າງປະເທດ: ໝາຍເຖິງ ລາຍການຊື້-ຂາຍເງິນຕາຕ່າງປະເທດສະກຸນໜຶ່ງໄປອີກສະກຸນໜຶ່ງ;
2. ບັນຊີຖານະແລກປ່ຽນເງິນຕາຕ່າງປະເທດ ( General Exchange Account ): ໝາຍເຖິງບັນຊີທີ່ບັນທຶກຕິດຕາມຈຳນວນເງິນຕາຕ່າງປະເທດທີ່ໄດ້ຊື້ ຫຼື ທີ່ໄດ້ຂາຍ ຊຶ່ງຜັງບັນຊີໄດ້ກຳນົດເລກໝາຍ XX-2382120, ເຄື່ອງໝາຍ XX ແທນລະຫັດສະກຸນເງິນຕາຕ່າງປະເທດແຕ່ລະສະກຸນ;
3. ບັນຊີມູນຄ່າຖານະແລກປ່ຽນເງິນຕາຕ່າງປະເທດ ( General Exchange Control Account ): ໝາຍເຖິງບັນຊີທີ່ບັນທຶກຕິດຕາມຈຳນວນເງິນກີບ(ສະກຸນເງິນ ຂອງ ສປປ ລາວ) ຊຶ່ງຜັງບັນຊີໄດ້ກຳນົດ